ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ພາກວິຊາຄູ ພາສາອັງກິດ-ໄອຊີທີ

ເລກທີ 020/ອກ.ອທ

ນະຄອນຫຼວງວຽງຈັນ, ວັນທີ 25 ກັນຍາ 2024

ບົດສະຫຼຸບປະຈຳເດືອນ 9/2024
ແລະ ແຜນວຽກຈຸດສຸມເດືອນ 10/2024

ຮຽນ: ທ່ານ ຜູ້ອຳນວຍການວິທະຍາໄລຄູ ດົງຄຳຊ້າງ

ເລື່ອງ: ບົດສະຫຼຸບປະຈຳເດືອນ 9/2024 ແລະ ແຜນວຽກຈຸດສຸມປະຈຳເດືອນ 10/2024 ຂອງພາກວິຊາຄູ ພາສາອັງກິດ-ໄອຊີທີ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ໄດ້ສັງລວມແຜນການເຄື່ອນໄຫວປະຈຳເດືອນ 9/2024 ແລະ ແຜນຈຸດສຸມປະຈຳເດືອນ 10/2024 ດັ່ງນີ້:

I. ການເຄື່ອນໄຫວວຽກງານທີ່ພົ້ນເດັ່ນປະຈຳເດືອນ 9/2024

ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ພະນັກງານສ່ວນຫຼາຍມີແນວຄິດຫຼັກໝັ້ນດີ ແລະ ມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ.
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ປະຕິບັດ ແລະ

ນັບຖືລະບຽບຂອງພັກ-ລັດໄດ້ເປັນຢ່າງດີເຊິ່ງມັນໄດ້ສະແດງອອກໃນການປະຕິບັດໂມງເວລາ ແຕ່ງກາຍ, ການໄປ-ການມາ ແລະ ການປະຕິບັດວຽກງານແຕ່ລະໜ້າວຽກ.

ຂ. ວຽກງານວິຊາສະເພາະ

1. ຄູທຸກຄົນໄດ້ເອົາໃຈໃສ່ຂຶ້ນຫ້ອງສອນເປັນປົກກະຕິ.
2. ນຳພານັກສຶກສາຄູອອກແຮງງານໃນຕອນແລງວັນພຸດ
3. ນຳພານັກສຶກສາຄູພາຍໃນສາຍອອກແຮງງານໃນເຂດຮັບຜິດຊອບ
4. ຈັດຕາຕະລາງສອນພາກປົກກະຕິ
5. ຈັດນັກສຶກສາລົງຝຶກສອນຕົວຈິງທີ່ໂຮງຮຽນມັດທະຍົມສາທິດ ດົງຄຳຊ້າງ
6. ຮຽບຮຽງເອກະສານປະກອບການສອນພາກປົກກະຕິ
7. ຮຽບຮຽງເອກະສານປະກອບການບັນລະຍາຍພາກປົກກະຕິ
8. ປ້ອນຄະແນນສາຍຄູປົກກະຕິ ແລະ ພັກສິ້ນປີຮຽນເຂົ້າຖານຂໍ້ມູນ
9. ເລື່ອນຫ້ອງຮຽນໃຫ້ນັກສຶກສາໃນຖານຂໍ້ມູນ
10. ລົງຕິດຕາມນັກສຶກສາລົງຝຶກສອນຕົວຈິງທີ່ໂຮງຮຽນມັດທະຍົມສາທິດ ດົງຄຳຊ້າງ
11. ກະກຽມເອກະສານເພື່ອປະເມີນຕຳແໜ່ງວິຊາການ
12. ສືບຕໍ່ເຮັດບົດວິໄຈ

13. ເຂົ້າຮ່ວມກອງປະຊຸມກະກຽມປະເມີນພາກສະໜາມ ກ່ຽວກັບການສອນທີ່ຄຳນຶງເຖິງຄວາມສະເໝີພາບທາງເພດ ຄັ້ງວັນທີ 24-27 ກັນຍາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ.

❖ **ຂໍ້ຄົງຄ້າງ:** ຍັງມີບາງວຽກທີ່ຕ້ອງໄດ້ສືບຕໍ່ປະຕິບັດ ແລະ ປະຕິບັດແບບຕໍ່ເນື່ອງ

II. ແຜນວຽກຈຸດສຸມປະຈຳເດືອນ 10/2024

ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1.ສືບຕໍ່ແນວຄິດຫຼັກໝັ້ນ, ເຊື່ອໝັ້ນຕໍ່ການນຳພາຂອງຂອງພັກ
2.ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3.ຫ້າວຫັນປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດ

ຂ. ວຽກງານວິຊາສະເພາະ

1. ສືບຕໍ່ຂຶ້ນຫ້ອງສອນປົກກະຕິ.
2. ສືບຕໍ່ນຳພານັກສຶກສາອອກແຮງງານໃນເຂດຮອບຜິດຊອບ
3. ປ້ອງກັນແບບເຂົ້າໂຄງວິໄຈ
4. ສືບຕໍ່ຕິດຕາມນັກສຶກສາລົງຝຶກສອນຕົວຈິງທີ່ໂຮງຮຽນມັດທະຍົມສາທິດ ດົງຄຳຊ້າງ
5. ຂຶ້ນແຜນຝຶກອົບຮົມການສອນພາສາອັງກິດໃຫ້ແກ່ຄູສອນໃນວິທະຍາໄລຄູ ດົງຄຳຊ້າງ

III. ຂໍ້ສະເໜີ

ດັ່ງນັ້ນ, ພາກວິຊາຄູ ພາສາອັງກິດ-ໄອຊີທີ ຈຶ່ງລາຍງານມາຍັງທ່ານເພື່ອຮັບຊາບຕາມທາງຄວນດ້ວຍ.

ຫົວໜ້າພາກວິຊາຄູ ພາສາອັງກິດ-ໄອຊີທີ **ຜູ້ສັງລວມ**